## ບົດຂ່າວ

## ໂຄງການທະນາຍຄວາມ ກຽມພ້ອມຈັດຕັ້ງປະຕິບັດ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ບົດບາດຂອງທະນາຍຄວາມ ໃນການພັດທະນາລັດທີ່ປົກຄອງດ້ວຍກົດໝາຍ ແລະ ການເຂົ້າເຖິງຄວາມຍຸຕິທຳຂອງ ສປປ ລາວ




*ຮູບຖ່າຍຜູ້ຕາງໜ້າລັດຖະບານ, ຄູ່ຮ່ວມພັດທະນາ, ອົງການໃນເຄືອຂ່າຍສະຫະປະຊາຊາດ, ບໍລິສັດກົດໝາຍ, ທະນາຍຄວາມ, ອົງການຈັດຕັ້ງທາງສັງຄົມ ແລະ ຫ້ອງການ ຕ້ານຢາເສບຕິດ ແລະ ປະຕິບັດກົດໝາຍ (INL) ປະຈຳສະຖານທູດອາເມລິກາ ນະຄອນຫຼວງວຽງຈັນ ເຂົ້າຮ່ວມພິທີເປີດໂຄງການທະນາຍຄວາມ.*

ຖ່າຍໂດຍ ສິນສະຫວັນ ສອນປະເສີດ, ຜູ້ຮັບຜິດຊອບວຽກງານສື່ສານ, ພະແນກການປົກຄອງ, UNDP.

**ທີ່ນະຄອນຫຼວງວຽງຈັນ ວັນທີ 3 ເມສາ 2023,** ທະນາຍຄວາມມີບົດບາດສຳຄັນໃນການປະກອບສ່ວນການເຂົ້າເຖິງຄວາມຍຸຕິທຳ ແລະ ການສ້າງລັດທີ່ປົກຄອງດ້ວຍກົດໝາຍ. ທະນາຍຄວາມປະກອບສ່ວນສ້າງຄວາມເຊື່ອໝັ້ນແກ່ປະຊາຊົນ, ສົ່ງເສີມການປົກປ້ອງສິດທິຂອງປະຊາຊົນ ແລະ ຊ່ວຍໃນການສ້າງສະພາບແວດລ້ອມທີ່ດີ ເພື່ອການພັດທະນາເສດຖະກິດ-ສັງຄົມທີ່ມີສ່ວນຮ່ວມໂດຍບໍ່ປ່ອຍໃຜຢູ່ເບື້ອງຫຼັງ. ເຖິງຢ່າງໃດກໍຕາມ, ສປປ ລາວ ຍັງມີທະນາຍຄວາມໜ້ອຍກວ່າ 400 ຄົນ ທີ່ຊ່ວຍເຫຼືອປະຊາຊົນ ສະນັ້ນຈຶ່ງມີຄວາມຈຳເປັນທີ່ຕ້ອງການໃຫ້ມີຈຳນວນທະນາຍຄວາມເພີ່ມຂຶ້ນ ພ້ອມທັງການພັດທະນາຄວາມສາມາດຂອງເຂົາເຈົ້າ.

ໃນວັນທີ 3 ເມສາ 2023, ຜູ້ຕາງໜ້າລັດຖະບານ, ຄູ່ຮ່ວມພັດທະນາ, ອົງການໃນເຄືອຂ່າຍສະຫະປະຊາຊາດ, ບໍລິສັດກົດໝາຍ, ທະນາຍຄວາມ ແລະ ອົງການຈັດຕັ້ງທາງສັງຄົມ ທີ່ເຮັດວຽກໃນຂົງເຂດການສ້າງລັດທີ່ປົກຄອງດ້ວຍກົດໝາຍ ໄດ້ເຂົ້າຮ່ວມພິທີເປີດໂຄງການທະນາຍຄວາມ ຢູ່ທີ່ ນະຄອນຫຼວງວຽງຈັນ. ໂຄງການນີ້ໄດ້ຮັບທຶນສະໜັບສະໜູນຈາກຫ້ອງການ ຕ້ານຢາເສບຕິດ ແລະ ປະຕິບັດກົດໝາຍ (INL) ປະຈຳສະຖານທູດອາເມລິກາ ນະຄອນຫຼວງວຽງຈັນ ແລະ ມີໄລຍະເວລາຈັດຕັ້ງປະຕິບັດໂຄງການ 3 ປີ ໂດຍພາຍໃຕ້ການຄຸ້ມຄອງຂອງອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ແລະ ການຮ່ວມມືຢ່າງໃກ້ຊິດໃນການຈັດຕັ້ງປະຕິບັດໂຄງການກັບກະຊວງຍຸຕິທຳ ແລະ ສະພາທະນາຍຄວາມລາວ (LBA).

ໂຄງການນີ້ມີຈຸດປະສົງເພື່ອສ້າງຄວາມເຂັ້ມແຂງໃນການສ້າງລັດທີ່ປົກຄອງດ້ວຍກົດໝາຍ ການອອກແບບໂຄງການປຽບທຽບໃສ່ກັບອົງປະກອບ ຫົວ, ຫົວໃຈ ແລະ ມື. ບູລິມະສິດສຳຄັນຂອງອົງປະກອບຫົວ ແມ່ນເນັ້ນໃສ່ຄວາມຕ້ອງການຂອງສະພາທະນາຍຄວາມ ເພື່ອເສີມສ້າງຄວາມສາມາດຂອງຕົນ ໃນການກຳນົດວິໄສທັດຍຸດທະສາດ ແລະ ການພັດທະນາວິຊາຊີບກົດໝາຍຢ່າງຕໍ່ເນື່ອງ. ທ່ານ ວໍລັດສະໝີ ສຸລິປະພັນ, ປະທານສະພາທະນາຍຄວາມລາວ ໄດ້ກ່າວເນັ້ນຢ້ຳເຖິງຄວາມສຳຄັນຂອງການສົ່ງເສີມບົດບາດທະນາຍຄວາມ ເຊິ່ງທ່ານຊີ້ໃຫ້ເຫັນເຖິງຜົນໄດ້ຮັບຂອງການມີຍຸດທະສາດທີ່ແທດເໝາະກັບສະພາບຕົວຈິງ ໃນ ສປປ ລາວ ແລະ ບົນພື້ນຖານຄວາມສາມາດທີ່ມີຢູ່ຂອງສະພາທະນາຍຄວາມລາວ.

ບູລິມະສິດຂອງອົງປະກອບຫົວໃຈ ແມ່ນບໍ່ສະເພາະແຕ່ເນັ້ນໃສ່ເຖິງຄວາມປາດຖະໜາໃນການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາທະນາຍຄວາມລາວ ແຕ່ຍັງເນັ້ນການສ້າງຄວາມເຂັ້ມແຂງໃຫ້ແກ່ທະນາຍຄວາມ ດ້ວຍການສົ່ງເສີມເຄືອຂ່າຍຂອງທະນາຍຄວາມທີ່ມີຄວາມມຸ່ງໝັ້ນເພື່ອກ້າວໄປສູ່ຄວາມເປັນມືອາຊີບ ແລະ ຍົກສູງມາດຕະຖານດ້ານຈັນຍາບັນ. ບົນພື້ນຖານການໃຫ້ຄຳປຶກສາ, ການຮຽນຮູ້ຈາກບັນດາເພື່ອນຮ່ວມງານ, ແລະ ຈາກສູນແລກປ່ຽນຄວາມຮູ້ປະສົບການໃນຂັ້ນແຂວງ ເພື່ອຊ່ວຍທະນາຍຄວາມໃຫ້ໄດ້ຮັບການສ້າງຄວາມເຂັ້ມແຂງດ້ານວິຊາຊີບຈາກກຸ່ມຂອງທະນາຍຄວາມດ້ວຍກັນ.

ອົງປະກອບມື ເນັ້ນໃສ່ການໜັບສະໜູນເພື່ອຕອບສະໜອງຄວາມຕ້ອງການດ້ານເຄື່ອງມື ທີ່ນຳໃຊ້ຕົວຈິງໃນການຮຽນຮູ້ ແລະ ການພັດທະນາວິຊາຊີບທະນາຍຄວາມ. ທ່ານ ເກດສະໜາ ພົມມະຈັນ, ຮອງລັດຖະມົນຕີກະຊວງຍຸຕິທຳ ໄດ້ຊີ້ໃຫ້ເຫັນຈຸດນີ້ ໂດຍເນັ້ນເຖິງຄວາມສຳຄັນຂອງການຊ່ວຍເຫຼືອທີ່ເປັນປະໂຫຍດແທ້ຈິງ ແລະ ເປັນເຄື່ອງມືທີ່ທະນາຍຄວາມສາມາດນຳໃຊ້ໄດ້ຕົວຈິງ.

ທ່ານ ນາງ ແຄັດທະລິນ ເຟືອງ, ຮອງຜູ້ຕາງໜ້າອົງການ UNDP ຍັງໄດ້ເນັ້ນໜັກເຖິງຄວາມສຳຄັນຂອງໂຄງການ ໃນດ້ານການພັດທະນາເສດຖະກິດ-ສັງຄົມຕື່ມອີກວ່າ: "ທະນາຍຄວາມປະກອບສ່ວນໃນການສົ່ງເສີມຄວາມໝັ້ນຄົງ, ຍົກສູງຄວາມຮັບຜິດຊອບ ແລະ ປະກອບສ່ວນເຂົ້າໃນສັງຄົມທີ່ປົກຄອງລັດດ້ວຍກົດໝາຍ ເພື່ອເຮັດໃຫ້ທຸກຄົນສາມາດເຂົ້າເຖິງຄວາມຍຸຕິທຳ. ສະນັ້ນ,

ການສະໜັບສະໜູນທະນາຍຄວາມ ແມ່ນມີຄວາມສຳຄັນຢ່າງແທ້ຈິງຕໍ່ການພັດທະນາແບບມີສ່ວນຮ່ວມ ແລະ ຮອບດ້ານຂອງ ສປປ ລາວ”.

ການຮັບຮູ້ບົດບາດຍິງ-ຊາຍ ແມ່ນເປັນໜຶ່ງໃນບັນຫາປິ່ນອ້ອມ, ຄວາມສະເໝີພາບລະຫວ່າງຍິງ-ຊາຍ ຈະຖືກສົ່ງເສີມໃນທຸກກິດຈະກຳຂອງໂຄງການ ໂດຍຜ່ານວິທີການທີ່ເອົາໃຈໃສ່ຄວາມສະເໝີພາບຍິງ-ຊາຍ ເຊິ່ງຈະຊ່ວຍຊຸກຍູ້ຄວາມເປັນຜູ້ນຳຂອງທະນາຍຄວາມຍິງ ແລະ ສ້າງຄວາມຮັບຮູ້ກ່ຽວກັບບັນຫາທີ່ມີຄວາມສຳຄັນເຊັ່ນ: ສິດທິຂອງແມ່ຍິງ ແລະ ຄວາມຮຸນແຮງບົນພື້ນຖານທາງເພດ. ພ້ອມກັນນັ້ນ, ວິທີການແບ່ງຂັ້ນຄຸ້ມຄອງແບບກະຈາຍ ຈະເປັນພື້ນຖານເພື່ອຮັບປະກັນວ່າໂຄງການນີ້ສາມາດໃຫ້ຜົນໄດ້ຮັບຕໍ່ທະນາຍຄວາມ ແລະ ລູກຄວາມຂອງເຂົາເຈົ້າໃນທົ່ວປະເທດ. ທ່ານ ວິນລ້ຽມ ໂຊເລ້, ຫົວໜ້າຫ້ອງການ INL, ໄດ້ຢ້ຳຄືນໃນຈຸດນີ້ ໂດຍທ່ານເນັ້ນຄວາມສຳຄັນຂອງການສ້າງຜົນໄດ້ຮັບແບບຍືນຍົງ ຜ່ານກິດຈະກຳທີ່ສາມາດສືບຕໍ່ປະຕິບັດໂດຍສະພາທະນາຍຄວາມລາວ ແລະ ທະນາຍຄວາມ ພາຍຫຼັງການສິ້ນສຸດການຈັດຕັ້ງປະຕິບັດໂຄງການ.

ໂຄງການນີ້ເປັນພຽງສ່ວນໜຶ່ງທີ່ປະກອບສ່ວນເຂົ້າໃນວຽກງານອັນໃຫຍ່ຫຼວງຂອງລັດຖະບານ, ຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອສົ່ງເສີມການສ້າງລັດທີ່ປົກຄອງດ້ວຍກົດໝາຍ. ໃນປີນີ້, ຍຸດທະສາດສຳລັບສະພາທະນາຍຄວາມລາວ ຈະໄດ້ສ້າງຂຶ້ນຮ່ວມກັນ ແລະ ຖືກຮັບຮອງ, ເຄືອຂ່າຍທະນາຍຄວາມທີ່ມີຄວາມມຸ່ງໝັ້ນຈະໄດ້ຮັບການສ້າງຕັ້ງຂຶ້ນ ແລະ ມີສ່ວນຮ່ວມໃນຫຼາຍໆບູລິມະສິດ ແລະ ພ້ອມກັນນັ້ນຈະລິເລີ່ມພັດທະນາໂຄງການສຳລັບການຮຽນຮູ້ແບບຕໍ່ເນື່ອງ. ໃນບັນດາສິ່ງທີ່ກ່າວມານີ້ ເປັນພຽງສ່ວນໜຶ່ງໃນເບື້ອງຕົ້ນທີ່ຈະມີການຈັດຕັ້ງປະຕິບັດ ໃນປີ 2024 ແລະ 2025 ເພື່ອຮັບປະກັນການປ່ຽນແປງທີ່ສຳຄັນ ທີ່ສາມາດສ້າງຜົນໄດ້ຮັບທີ່ຍືນຍົງນອກເໜືອຈາກເປົ້າໝາຍຂອງໂຄງການ.

**ຫາກທ່ານຕ້ອງການຂໍ້ມູນເພີ່ມເຕີມ ສາມາດຕິດຕໍ່:**

ທ່ານ ນາງ ອັກສອນທິບ ສົມວໍລະຈິດ, ຫົວໜ້າໜ່ວຍງານການສື່ສານຂອງ UNDP

aksonethip.somvorachit@undp.org

ທ່ານ ນາງ ສິນສະຫວັນ ສອນປະເສີດ, ພະນັກງານສື່ສານ ແລະ ປະຊາສຳພັນພະແນກການປົກຄອງ UNDP

sinsavanh.sonepaseuth@undp.org

ທ່ານ ນາງ ທິບພະສອນ ຫຼວງອາໄພ, ຜູ້ປະສານງານໂຄງການທະນາຍຄວາມຂອງ UNDP

thipphasone.luangaphay@undp.org ຫຼື ໂທລະສັບ: 020 5583 6000.